# ເຢເຣມີ (ເຢເຣມີຢາ)

ໃຈຄວາມສຳຄັນ ການຕັກເຕີນ

ຂໍ້ຄວາມສຳຄັນ ໑:໑໐

ຈຳນວນບົດ ໕໒ ບົດ

ເຣື່ອງເກີດຂຶ້ນໃນປີ ໖໒໗ ເຖິງ ໕໘໕ ກ່ອນ ຄ.ສ.

ເຣື່ອງເກີດຂຶ້ນທີ່ ປະເທດຢູດາ

ຈັກກະພັດທີ່ມີອຳນາດ ອາຊີຣີ ແລະ ບາບີໂລນ

ເຢເຣມີແປວ່າ ຜູ້ທີ່ພຣະເຢໂຮວາຊົງຕັ້ງໄວ້

## ໑. ວ່າດ້ວຍຄາວສໄນຂອງເຢເຣມີ

ໜັງສືເຢເຣມີເປັນໜັງສືກ່າວ ເຖິງຄາວນຶ່ງທີ່ໜ້າຢ້ານກົວ ຂອງຊາວຢູດາຄືແມ່ນວ່າຕະກູນຢູດາທັງສິບໄດ້ຖືກໂທດແລ້ວພວກເຂົາກໍບໍ່ໄດ້ກັບໃຈເສັຍໃໝ່ ສັນນັ້ນພຣະເຈົ້າຈຶ່ງຊົງຕັດສິນພຣະໄທໃສ່ໂທດພວກເຂົາອີກ ໂດຍຊົງສັ່ງໃຫ້ເຢເຣມີປະກາດຄຳຕັດສິນພວກເຂົາ ໃນຄາວເຢເຣມີດຳເນີນຕາມຄຳສັ່ງຂອງພຣະເຈົ້ານີ້ ໄດ້ມີກະສັດຫ້າອົງຊົງສເວີຍຣາດຢູ່ແຕ່ກະສັດອົງທີ່ສຳຄັນແທ້ມີ ໓ ອົງ ຄື: ໂຢເຊັຍເຊ ເຢໂຫຍາກີມແລະເຊເດເຊັຍເຊ ຖ້າຈະໃຫ້ເຂົ້າໃຈເຣື່ອງໃນໜັງສືນີ້ດີຂຶ້ນ ຂໍໃຫ້ອ່ານເຣື່ອງກະສັດໃນໜັງສືຂ່າວຄາວເຫລັ້ມທີ່ສອງ ບົດທີ ໓໔—໓໖

## ໕. ວ່າດ້ວຍເຢເຣມີບຸຊຽນ

ເມື່ອ ພຣະເຈົ້າ ຊົງເອີ້ນ ເອົາເຢເຣມີ ໃຫ້ ເຂົ້າທຳງານ ຂອງ ພຣະອົງ ເຢເຣມີຍັງເປັນຄົນໜຸ່ມຢູ່ຈີເ ເພິ່ນໄດ້ຕອບວ່າ "ຂ້ານ້ອຍເປັນເດັກນ້ອຍ" (ບົດທີ່໑:໖) ໜັງສືທີ່ເພິ່ນຂຽນນີ້ເອງໄດ້ບອກໃຫ້ຮູ້ສຶກວ່າ ເພິ່ນເປັນຄົນໃຈອ່ອນບໍ່ມີຄວາມກ້າຫານ ແຕ່ພຣະເຈົ້າໄດ້ຊົງຊ່ອຍເພິ່ນໃຫ້ມີໃຈກ້າຫານ ໂດຍຊົງໃຫ້ ເພິ່ນເປັນຜູ້ປະກາດ ພຣະທັມຄຳສອນ ຂອງພຣະອົງແກ່ຄົນ ທັງ-ຫລາຍ ແລະເພື່ອໃຫ້ເພິ່ນຕັກເຕືອນເຈົ້ານາຍທັງຫລາຍ ເພິ່ນໄດ້ຖືກພວກມະຫາ ປະໂລຫິດແລະພວກ ຣາສດອນຕົບຕີແລະ ຂົ່ມເຫັງແຕ່ ເພິ່ນກໍບໍ່ໄດ້ທໍ້ຖອຍແລະບໍ່ອ່ອນກຳລັງເລີຍ ເພິ່ນຕັ້ງ ໃຈປົວຣະບັດພຣະເຈົ້າແລະໝັ້ນຄົງຢູ່ ເພິ່ນມີຄວາມເຊື່ອໃນພຣະເຈົ້າຫລາຍ ພຣະເຈົ້າກໍຊົງຮັກແພງເພິ່ນ ແລະ ເພື່ອນຝູງຂອງເພິ່ນກໍຮັກແພງເພິ່ນດ້ວຍ.

ໃນເວລາທີ່ເພິ່ນອົດທົນທຸກຢ່າງເພາະເຫັນແກ່ຄວາມຮັກຂອງພຣະ-ເຈົ້ານີ້ ເພິ່ນໄດ້ທຳນວາຍວ່າພວກຢູດາຈະຕົກເປັນຂ້ອຍຂ້າຂອງກະສັດບາບີໂລນ (ບົດທີ ໒໕:໙–໑໑) ແລ້ວພວກຢູດາກໍຟ້ອງເພິ່ນວ່າເປັນກະບົດ ພວກເຂົາໄດ້ຈັບເພິ່ນໄປຂັງໄວ້ໃນຄຸກ (໓໗:໑໓–໑໔) ແລ້ວເອົາເພິ່ນໄປຖິ້ມລົງຂຸມ (໓໘:໖) ຕາມປະວັດສາດບອກວ່າເຢເຣມີຖືກເຂົາຂ້າຕາຍສນັ້ນເຢເຣມີຈຶ່ງປຽບກັບພຣະເຢຊູຜູ້ຖືກທໍຣະມານ.

## ໖. ວ່າດ້ວຍຄວາມອົດທົນຂອງທ່ານເຢເຣມີ

໑. ເຢເຣມີໄດ້ ມີສ່ວນໃນ ຄວາມທຸກ ຂອງຄົນອື່ນ (ໂຣມ

໑໒:໑໕) ເພິ່ນມີໃຈໜັກແໜ້ນໃນຄຳທຳນາຍຂອງເພິ່ນທີ່ມີຕໍ່ໝູ່ (ຄາລາຊີ ໖:໒) ເພິ່ນຮັບເອົາບາບແທນຄົນອື່ນ ເພິ່ນມີເຣື່ອງທີ່ຈະປະຖຸ້ມເພື່ອນຂອງ ເພິ່ນເພາະວ່າ ພວກເຂົາບໍ່ເພິ່ງຄວາມແລະຂົ້ມເຫັງເພິ່ນ ແຕ່ເພິ່ນກໍບໍ່ປະຖຸ້ມແລະຍັງຖືພວກເຂົາເປັນເພື່ອນດຽວກັນ.

໒. ເຢເຣມີບໍ່ໄດ້ເສັຍໃຈໃນຄວາມທຸກລຳບາກນັ້ນ ເພິ່ນບໍ່ໄດ້ຈົ່ມ ຖຸກຕໍ່ ພຣະພັກ ຂອງ ພຣະເຈົ້າ ແຕ່ໄດ້ ຮ້ອງເພງ ຮ່ຳໄຮຕໍ່ພຣະເຈົ້າ

## ໔. ວ່າດ້ວຍເນື້ອຄວາມ

ຄຳວ່າ "ໃຫ້ກິນເສັຍ ມ້າງເພ ທຳລາຍ ກໍ່ສ້າງ ແລະປູກຝັງ ໑:໑໐" ເປັນພາຣະກິດການຂອງເຢເຣມີຊຶ່ງເພິ່ນໄດ້ກະທຳດັ່ງນີ້:

ກ. ໃນທາງບ້ານເມືອງ ເຢເຣມີໄດ້ປະກາດວ່າພວກຢູດາ ໃນກຸງເຢຣູຊາເລັມຈະຖືກໄທດເພາະພວກເຂົາບໍ່ມີຄວາມສັດຊື່ ເພິ່ນໄດ້ບອກໃຫ້ພວກຢູດາຍອມກະສັດບາບີໂລນແລະບໍ່ໃຫ້ຕໍ່ສູ້ ເພື່ອໃຫ້ຖືກ ຕ້ອງກັບນ້ຳພຣະທັຍຂອງພຣະເຈົ້າ ແລະເພິ່ນໄດ້ທຳນາຍວ່າພວກຢູດາ ຈະຖືກໄທດກັກຂັງຢູ່ ປະເທດບາບີ ໂລນເປັນເວລາ ກຸ໐ ປີ (໒໙:໑໐) ແຕ່ພຣະເຈົ້າຈະຊົງໂຜດຊ່ອຍໃຫ້ພວກເຂົາໄດ້ກັບຄືນມາ.

ຂ. ໃນທາງສາສນາ ເຢເຣມີໄດ້ຕຳນິຕິຕຽນພວກນີ້ນ້ອງເພາະ ພວກເຂົາບໍ່ ນັບຖື ພຣະເຈົ້າ ແລະເພາະພວກເຂົາໄດ້ດຳເນີນຊີວິດໃນທາງບໍ່ຊອບທັມ (໕:໑—໖) ເຢເຣມີໄດ້ກ່າວຫາພວກເຂົ້າວ່າເປັນ ຜູ້ປະຖິ້ມບໍ່ນ້ຳແຫ່ງຊີວິດແລະ ໄດ້ເຮັດແອ່ງຫີນທີ່ບົ່ມ ນ້ຳເພາະແອ່ງ ນັ້ນໄດ້ແຕກເສັຍ (໒:໑໓) ເພິ່ນໄດ້ຕັກເຕືອນພວກເຂົາໃຫ້ຫລັບຄືນທາງເກົ່າ (໖:໑໖)

ຄ. ໃນທາງທຳນວາຍ ຄຳທຳນວາຍຂອງເຢເຣມີໄດ້ເຖິງທີ່ສຳເຣັດຕັ້ງແຕ່ເພິ່ນໄດ້ມີຊີວິດຢູ່ກໍມີ ແລະໄດ້ເຖິງທີ່ສຳເຣັດໃນຄາວຂອງພຣະເຢຊູກໍມີ (໓໑:໑໕; ມັດທາຍ ໒:໑໗—໑໘) ຄຳທຳນວາຍກ່ຽວກັບຄຳສັນຍາໃໝ່ (໓໑:໓໑—໓໔) ໄດ້ເຖິງທີ່ສຳເຣັດດ້ວຍໄມ້ກາງແຂນ (ລູກາ ໒໒:໒໐) ແລະພຣະເຢຊູເອງກໍເຄີຍອ້າງເອົາຄຳຂອງເຢເຣມີ ເມື່ອເວລາພຣະອົງຊົງຂັບໄລ່ພວກພໍ່ຄ້າອອກຈາກພຣະວິຫານ (໗:໙—໑໑; ມາຣະໂກ ໑໑:໑໗) ຄຳທຳນວາຍກ່ຽວກັບເມືອງບາບີໂລນ ຕາມທີ່ ເຫັນໃນພົງສີ ຄຳປາກົດວ່າຈະ ເຖິງທີ່ສຳເຣັດໃນຄາວສິ້ນໂລກ (໕໑:໗,໘,໔໕,໖໓,໖໔, ຄຳປາກົດ ໑໔:໘;໑໗:໒—໕:໑໘:໒—໕,໒໑

## ໕. ວ່າດ້ວຍຄຳທຳນວາຍເຖິງພວກຢູດາ

໑. ພວກຢູດາຈະໄດ້ເຂົ້າໄປໃນປະເທດອິສຣາເອັນອີກ ບົດ ໑໖:໑໔–໑໕ ໒໓:໓–໔ ; ໓໐:໓; ໓໑:໑–໑໔; ໓໒:໓໗ –໔໒

໒. ຕະກູນຢູດາກັບຕະກູນທັງສິບຈະເຂົ້າເປັນພວກດຽວກັນ ບົດ ໓:໑໘ ; ໓໐:໓; ໓໓:໗ ໕໐:໔–໕

໓. ກຸງເຢຣູຊາເລັມຈະເປັນເຫດໃຫ້ປະເທດທັງໝົດມີຄວາມຍິນດີ ໓໓:໙–໑໓

໔. ປະເທດໃດທີ່ຂົ່ມເຫັງປະເທດນີ້ຈະຖືກໂທດ ບົດ ໓໐:໑໑, ໑໖,໒໐

໕. ພວກຢູດາຈະປະໃຈເກົ່າເອົາໃຈໃໝ່ ບົດ ໓໑:໓໓ ; ໓໓:໖ –໘,໑໖

## ໖. ວ່າດ້ວຍບົດສຳຄັນ

ບົດ ໒ ສຳລັບຜູ້ທີ່ຫລົງລືມພຣະເຈົ້າ

,, ໕ ວ່າດ້ວຍຜູ້ທີ່ໃຈແຂງ

,, ໗ ການປະຕິບັດຕາມຮີດຄອງທຳນຽມ

,, ໓໑ ວ່າດ້ວຍຄວາມຮັກຂອງພຣະເຈົ້າ

,, ໓໓ ວ່າດ້ວຍການດີພຍາດແລະມີຄວາມລຳບາຍ

## ງ. ການແບ່ງເປັນພາກ

ເປັນການຍາກທີ່ຈະແບ່ງໜັງສືເຢເຣມີເປັນພາກເພາະຄຳ ທຳນວາຍທີ່ຂຽນໄວ້ນັ້ນບໍ່ໄດ້ ຂຽນຕາມລຳດັບ ສນັ້ນຈຶ່ງຂໍແບ່ງຕາມລຳດັບກະສັດສຳຄັນທັງສາມດັ່ງນີ້:

### ພາກທີ ໑ ຄຳທຳນວາຍໃນຄາວກະສັດໂຢເຊັບເຊ ບົດ ໑–໑໒

໑. ເຢເຣມີໄດ້ຍິນຄຳເອີ້ນຂອງພຣະເຈົ້າ ບົດ ໑

໒. ຄຳເອີ້ນໃຫ້ຫລັບຕັ້ງໃຈໃໝ່ແລະບົດເພງຮ່ຳໄຮ ບົດ ໒–໑໒

### ພາກທີ ໒ ຄຳທຳນວາຍໃນຄາວກະສັດເຢໂຫຢາ-ກິມ ບົດ ໑໓–໒໐

ການຕັດສິນລົງໂທດເປັນຄວາມຈຳເປັນ

### ພາກທີ ໓ ຄຳທຳນວາຍໃນຄາວກະສັດເຊເດເຊັຍ ບົດ ໒໑–໓໙

ກ. ພຣະເຈົ້າ ມອບ ພວກ ຢູດາ ໃຫ້ແກ່ ກະສັດ ເນບູ ກາດ ເນຊາເຣ ໒໑–໒໙ ເພາະການປະພຶດຊົ່ວຂອງເຂົາ ບົດ ໒໑–໒໕

ຂ. ຄວາມເຫັນ ລ່ວງໜ້າ ວ່າ ກຸງເຢຣູຊາເລັມ ຈະ ຕັ້ງຂຶ້ນໃໝ່ ແລະວ່າ ເມຊີອາ ຈະໄດ້ສເວີຍຣາດ ບົດ ໓໐–໓໓

ຄ. ຄຳປະກາດວ່າພວກສັດຕູຈະ ລ້ອມກຸງເຢຣູຊາເລັມ ເຖິງສອງຄັ້ງ ບົດ ໓໔–໓໙

## ພາກທີ ໔ ຄຳທຳນວາຍພາຍຫລັງກຸງເຢຣູຊາເລັມໄດ້ລົ້ມແລ້ວ

໑. ເຫດການຕ່າງ ໆ ທີ່ຈະບັງເກີດຂຶ້ນພາຍຫລັງກຸງເຢຣູຊາເລັມລົ້ມແລ້ວແລະວ່າພວກເຂົາຈະໄດ້ໄປຢູ່ໃນ ປະເທດເອຢິບໂຕ ບົດ ໔໐–໔໕

໒. ຄຳທຳນວາຍກ່ຽວກັບພວກຕ່າງປະເທດ ບົດ ໔໖–໕໑

໓. ເລື່ອງການຍາດແຍ້ງເອົາກຸງເຢຣູຊາເລັມ ບົດ ໕໒